FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມຮັບຮອງຂໍ້ມູນຜົນກະທົບ ແລະ ການກໍານົດລາຄາການຊົດເຊີຍເບື້ອງຕົ້ນ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ລວມທັງ ສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເມືອງດາກຈຶງ ຂອງບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈໍາກັດ, ຄັ້ງວັນທີ 17 ກຸມພາ 2022

- ອີງຕາມ ດໍາລັດເລກທີ 84/ລບ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ແລະ ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 21/ລບ, ລົງວັນທີ 31 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ-ແຂວງເຊກອງ, ສະບັບເລກທີ 160/ຈຂ.ຊກ, ລົງວັນທີ 26/11/2020. ວ່າ ດ້ວຍການແຕ່ງຕັ້ງຄະນະປະທານ, ກອງເລຂາ ຄະນະກໍາມະການຄຸ້ມຄອງສິ່ງແວດລ້ອມທໍາມະຊາດ-ສັງຄົມ ແລະ ແກ້ໄຂຜົນກະທົບຈາກໂຄງການພັດທະນາທົ່ວແຂວງ;

ໃນຕອນເຊົ້າ ວັນທີ 17 ກຸມພາ 2022 ເວລາ 8:00-12:00 ໂມງ ທີ່ຫ້ອງປະຊຸມ ICT ມສ ເມືອງດາກຈຶງ ໄດ້ຈັດກອງປະຊຸມ ຜ່ານຂໍ້ມູນຜົນກະທົບ ແລະ ປຶກສາຫາລືກ່ຽວກັບການກໍານົດລາຄາທົດແທນ-ຊົດເຊີຍຜົນກະທົບ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ຢູ່ເມືອງດາກຈຶງ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຂອງບໍລິສັດ ອິມແພັກເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈໍາກັດ, ໂດຍການເປັນປະທານຮ່ວມ ຂອງທ່ານ ໄລສອນ ມົດສຸວັນ ກໍາມະການພັກແຂວງ ເລຂາພັກເມືອງ ເຈົ້າເມືອງ-ເມືອງດາກຈຶງ ແລະ ທ່ານ ບຸນເລີຍ ນັນທະວົງ ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງເຊກອງ ມີຜູ້ເຂົ້າຮ່ວມທັງໝົດ: 61 ທ່ານ, ຍິງ: 12 ທ່ານ, ມາຈາກພະແນກການ, ຂະແໜງການກ່ຽວຂ້ອງຂັ້ນແຂວງ, ເມືອງດາກຈຶງ, ບໍລິສັດທີ່ປຶກສາດ້ານສິ່ງແວດລ້ອມ, ຜູ້ພັດທະນາໂຄງການ ແລະ ອໍານາດການປົກຄອງບ້ານເປົ້າໝາຍ (ມີລາຍຊື່ຕິດຂັດມາພ້ອມ)

## I. ຈຸດປະສົງ:

- ເພື່ອຮັບຟັງການລາຍງານຄວາມເປັນມາ, ຂໍ້ມູນຜົນກະທົບ ແລະ ການກໍານົດລາຄາທົດແທນ-ຊົດເຊີຍ ຜົນກະທົບເບື້ອງຕົ້ນ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ຢູ່ເມືອງດາກຈຶງ ລວມທັງສາຍສົ່ງໄຟຟ້າ ແຮງສູງ 500 ກວ ຂອງບໍລິສັດ ອິມແພັກເອັນເນີຈີ ເອເຊຍ ດີວີລົບເມັນ ຈໍາກັດ;
- ເພື່ອມີຄໍາເຫັນປຶກສາຫາລື ແລະ ເຫັນດີເປັນເອກະພາບກັນ ຮັບຮອງເອົາ ຂໍ້ມູນຜົນກະທົບ ແລະ ການກໍານົດລາຄາທົດແທນ-ຊົດເຊີຍຜົນກະທົບ ເບື້ອງຕົ້ນ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ຢູ່ເມືອງ ດາກຈຶງ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຂອງບໍລິສັດ ອິມແພັກເອັນເນີຈີ ເອເຊຍ ດີວີລົບເມັນ ຈໍາກັດ;

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT
สแกนด้วย CamScanner

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

## II. ເນື້ອໃນ:

ກອງປະຊຸມໃຫ້ກຽດກ່າວເປີດຢ່າງເປັນທາງການ ຂອງທ່ານ ໄລສອນ ມິດສຸວັນ ເຈົ້າເມືອງ-ເມືອງດາກຈຶງ ຈາກນັ້ນ ກໍ່ໄດ້ຮັບຟັງການລາຍງານຄວາມເປັນມາຂອງໂຄງການ ຈາກບໍລິສັດຜູ້ພັດທະນາໂຄງການ ພ້ອມທັງສະເໜີ ຂໍ້ມູນຜົນກະທົບ ແລະ ການກໍານົດລາຄາທົດແທນ-ຊົດເຊີຍຜົນກະທົບ ເບື້ອງຕົ້ນ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ຢູ່ເມືອງດາກຈຶງ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຂອງບໍລິສັດ ອິມແພັກເອັນເນີຈີ ເອເຊຍ ດີວີລົບເມັນ ຈໍາກັດ, ເຊິ່ງສະເໜີໂດຍ ບໍລິສັດ ອິນໂນກຣີນ ເອັນຈີເນຍລິງ ຈໍາກັດ ທີ່ປຶກສາດ້ານສິ່ງແວດ ລ້ອມ, ຫຼັງຈາກນັ້ນ ຜູ້ແທນກອງປະຊຸມ ກໍ່ໄດ້ມີຄໍາເຫັນປຶກສາຫາລື-ແລກປ່ຽນຄວາມຄິດຄວາມເຫັນຢ່າງກົງໄປກົງ ມາ ດ້ວຍຄວາມຮັບຜິດຊອບສູງ ແລະ ໄດ້ຕົກລົງເຫັນດີເປັນເອກະພາບຮ່ວມກັນດັ່ງນີ້:

1. ເຫັນດີເປັນເອກະພາບ ຕໍ່ກັບຂໍ້ມູນເນື້ອທີ່ ທີ່ຖືກຜົນກະທົບ ໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເມືອງດາກຈຶງ ແຂວງເຊກອງ, ເນື້ອທີ່ ທີ່ຖືກຜົນກະທົບທັງໝົດ: 748.88 ຮຕ,ຖືກກະທົບຖາວອນ: 136.70 ຮຕ ແລະ ຊົ່ວຄາວ: 612.18 ຮຕ, ເຊິ່ງໃນນີ້ ຖືກກະທົບຕໍ່ເນື້ອທີ່ທໍາການຜະລິດຂອງປະຊາຊົນ: 139.31 ຮຕ, ຖືກຜົນກະທົບຖາວອນ: 6.45 ຮຕ ແລະ ຊົ່ວຄາວ: 132.86 ຮຕ, ຜົນກະທົບທັງໝົດແມ່ນມາຈາກການກໍ່ສ້າງຕີນເສົາ: 128 ຕົ້ນ,ການກໍ່ສ້າງເສັ້ນທາງ ເຂົ້າຕີນເສົາ, ສ້າງສະຖານີຍ່ອຍ 4 ສະຖານີ, ແລວສາຍເກັບໄຟຟ້າຈາກສະຖານີຍ່ອຍມາສະຖານີໃຫຍ່ຂະໜາດ 115 KV ແລະ 35 KV, ສະຖານີຫຼັກ 500KV ຈໍານວນ 1 ສະຖານີ ແລະ ອົງປະກອບຕ່າງໆຂອງໂຄງການ.

2. ເຫັນດີເປັນເອກະພາບຕໍ່ກັບຂໍ້ມູນການນໍາໃຊ້ເນື້ອທີ່ຂອງໂຄງການ ທີ່ຖືກຜົນກະທົບຕໍ່ການນໍາໃຊ້ເນື້ອທີ່ດິນ ຂອງ ພໍ່ແມ່ປະຊາຊົນ ໃນຂອບເຂດໂຄງການ (ທາງກົງແລະທາງອ້ອມ) ທັງໝົດ: 23 ບ້ານ (ບ້ານດາກຕຽມ ດາກເຊັ້ງ, ດາກສຽງອາ, ຊຽງຫຼວງ, ດາກເຕຣິບ, ດາກຢາງ, ດາກແຢນ(ດາກເດີນ), ຕຮອງເມືອງ, ດາກດໍ ດາກເດັນ, ດາກຣັນ, ດາກບອງ, ດາກຈຶງ, ຕົງຊຽງ, ດາກປໍາ, ດາກເດີນ, ປຮາວ, ດາກກັງ ດາກໂຈມ, ງອນ ດອນ, ດາກມວນ, ດາກຕະອອກນ້ອຍ ແລະ ບ້ານດາກໂດມ), ມີ: 242 ຄອບຄົວ, ໃນນັ້ນ: ຄອບຄົວທີ່ໄດ້ ຮັບ ຜົນກະທົບເຂດ ຜະລິດໄຟຟ້າ ຈາກພະລັງງານລົມ 138 ຄອບຄົວ ແລະ ເຂດແລວສາຍສົ່ງໄຟຟ້າແຮງສູງ 500 ກວ: 104 ຄອບຄົວ, ສໍາລັບຂໍ້ມູນຂອງບາງບ້ານ ທີ່ຍັງບໍ່ທັນລະອຽດ ຈະແຈ້ງ ສະເໜີໃຫ້ບໍລິສັດຜູ້ພັດ ທະນາໂຄງການ ສົມທົບກັບຂະແໜງການກ່ຽວຂ້ອງຂອງແຂວງ, ເມືອງດາກຈຶງ ແລະ ອໍານາດການປົກຄອງ ບ້ານລົງເກັບກໍາເພີ່ມເຕີມໃນຂັ້ນຕອນເກັບກໍາຂໍ້ມູນລະອຽດກ່ອນການປະຕິບັດຊົດເຊີຍ;(ມີຕາຕະລາງສັງ ລວມຕິດຂັດມາພ້ອມ);

3. ກອງປະຊຸມ ເຫັນດີເປັນເອກະພາບ ໃຫ້ກອງເລຂາຄະນະກໍາມະການຄຸ້ມຄອງສິ່ງແວດລ້ອມຂັ້ນແຂວງຄົ້ນຄ້ວາ ປັບປຸງ ແລະ ກໍານົດລາຄາຫົວໜ່ວຍທົດແທນ-ຊົດເຊີຍ ເປັນອັນສະເພາະຂອງໂຄງການດັ່ງກ່າວ ຕາມສະ ພາບ, ເງື່ອນໄຂຕົວຈິງ ແລ້ວສະເໜີຂັ້ນເທິງພິຈາລະນາອອກຂໍ້ຕົກລົງ ເປັນທາງການ ບົນພື້ນຖານສອດຄ່ອງ ຕາມລະບຽບກົດໝາຍ ແລະ ສອດຄ່ອງຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງ, ສະບັບເລກທີ74/ຈຂ.ຊກ, ລົງ ວັນທີ 09 ເມສາ 2018 ;

4. ພາຍຫຼັງສໍາເລັດກອງປະຊຸມຮັບຮອງຂໍ້ມູນຜົນກະທົບ ແລະ ການກໍານົດລາຄາທົດແທນ-ຊົດເຊີຍ ຄັ້ງນີ້ແລ້ວ ສະເໜີໃຫ້ບໍລິສັດ ຜູ້ພັດທະນາໂຄງການ ລົງສົມທົບກັບຄະນະກໍາມະການຂັ້ນແຂວງ,ຂັ້ນເມືອງ, ອໍານາດການ ປົກຄອງບ້ານ ເພື່ອລົງເກັບກໍາຂໍ້ມູນຜົນກະທົບລະອຽດ ແຕ່ລະຄອບຄົວ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ຊັດ ເຈນ ຈາກຄອບຄົວທີ່ຖືກຜົນກະທົບ ແລະ ອໍານາດການປົກຄອງບ້ານ ຫຼັງຈາກນັ້ນ ມາຄິດໄລ່ມູນຄ່າການ ຊົດເຊີຍ;

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT
สแกนด้วย CamScanner

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

5. ພາຍຫຼັງສຳເລັດການຄິດໄລ່ມູນຄ່າການຊົດເຊີຍໃຫ້ແຕ່ລະຄອບຄົວສຳເລັດແລ້ວ ໃຫ້ກອງເລຂາຄະນະກຳມະການຂັ້ນແຂວງ, ເມືອງ ສະເໜີບໍລິສັດຜູ້ພັດທະນາໂຄງການຈັດກອງປະຊຸມຜ່ານ ຈຳນວນຕົວເລກເງິນຊົດເຊີຍຂອງແຕ່ລະຄອບຄົວ ໃນແຕ່ລະບ້ານ ແລະ ວິທີການຄິດໄລ່ຕ່າງໆ ເພື່ອຮັບຮອງເປັນທາງການ ຫຼັງຈາກນັ້ນ ໃຫ້ຄະນະກຳມະການ ແລະ ກອງເລຂາຄະນະກຳມະການ ຂັ້ນແຂວງ, ເມືອງ ຮ່ວມກັບບໍລິສັດຜູ້ພັດທະນາໂຄງການ ລົງໄປແຈ້ງ ແລະ ເຜີຍແຜ່ຕົວເລກເງິນຊົດເຊີຍສຸດທ້າຍໃຫ້ບ້ານ ແລະ ຄອບຄົວປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຮັບຊາບ ພ້ອມທັງລົງລາຍເຊັນຮັບຮອງສຸດທ້າຍ ກ່ອນໄດ້ຮັບ ເງິນຊົດເຊີຍ;

6. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ໃນນາມກອງເລຂາຄະນະກຳມະການຄຸ້ມ ຄອງສິ່ງແວດລ້ອມຂັ້ນແຂວງ ລາຍງານຜົນສຳເລັດ ຂອງກອງປະຊຸມ ໃຫ້ປະທານຄະນະກຳມະການຄຸ້ມຄອງສິ່ງ ແວດລ້ອມຂັ້ນແຂວງຮັບຊາບ ພ້ອມທັງສະເໜີຂັ້ນເທິງອອກຂໍ້ຕົກລົງຮັບຮອງເປັນທາງການ;

## III. ຄຳເຫັນຊີ້ນຳຂອງປະທານ:

ຕອນທ້າຍກອງປະຊຸມປະທານໄດ້ມີຄຳເຫັນສະຫຼຸບ ແລະ ຮຽກຮ້ອງໃຫ້ບັນດາທ່ານຄະນະກຳມະການ, ກອງເລຂາ ຄະນະກຳມະການຂັ້ນແຂວງ, ຂັ້ນເມືອງ ແລະ ອຳນາດການປົກຄອງບ້ານ ຈົ່ງພ້ອມກັນນຳເອົາເນື້ອໃນຈິດໃຈຜົນຂອງ ກອງປະຊຸມຄັ້ງນີ້ ໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ກອງປະຊຸມໄດ້ປິດລົງເວລາ 12:00 ໂມງ ຂອງວັນດຽວກັນດ້ວຍຜົນສຳເລັດອັນຈົບງາມ.

ດາກຈຶງ, ວັນທີ 17 ກຸມພາ 2022

| ປະທານກອງປະຊຸມ | ບໍລິສັດອິມແພກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ | ຜູ້ບັນທຶກ |
| --- | --- | --- |
| ໄລສອນ ມິດສຸວັນ | Chaovalit | |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT
สแกนด้วย CamScanner